NOTICE TO ALL CALFRESH RECIPIENTS
IMPORTANT — PLEASE READ

Effective October 1, 2016, State and Federal laws provide for the following:

Maximum CalFresh Allotments: These are benefit amounts your household would receive if your household had no income.

Household Size:	1	2	3	4	5	6	7	8	Each Additional Person
	$194	$357	$511	$649	$771	$925	$1022	$1169	+146

- Additionally, the maximum excess shelter deduction has increased from $504.00 to $517.00.
- The homeless shelter allowance of $143.00 remains unchanged.
- The standard deductions have changed as follows:

Standard Deductions for FFY 2017:

Household Size	Standard Deductions
1 to 3 persons	$157.00
4 persons	$168.00
5 persons	$197.00
6 or more persons	$226.00

The Standard Utility Allowance (SUA) of $385.00 increased to $389.00.

The Limited Utility Allowance (LUA) of $118.00 slightly increased to $122.00.

If the SUA/LUA is used as part of your shelter deduction and if you have had no changes in your CalFresh case, your CalFresh benefits may be changed. With the changes in your CalFresh benefits, the amount you will get depends on other household changes. These changes will be included in any notice you get that tells you about other changes in your CalFresh benefits.

If you think we made a mistake in figuring your October CalFresh benefits due to the new amounts for allotments and SUA/LUA you may ask for a state hearing, ***within 90 days of when you got this letter*** by writing to:

or you may call toll free: 1-800-952-5253. If you are deaf and use TDD, call 1-800-952-8349. When you ask for a state hearing, you must tell us why you think we made a mistake. You can speak for yourself at the hearing or you can have a friend, attorney, or other person speak for you, but you must get these people to help you. You may ask for free legal aid at a legal aid office in your area.

ແຈ້ງການສຳລັບຜູ້ຮັບການຊ່ວຍເຫຼືອຈາກ CALFRESH ທຸກຄົນ
ສຳຄັນ — ກະລຸນາອ່ານ

ໂດຍມີຜົນບັງຄັບໃຊ້ແຕ່ວັນທີ 1 ຕຸລາ 2016 ເປັນຕົ້ນໄປ, ກົດໝາຍຂອງຣັຖແລະຣັຖບານກາງ ໄດ້ກຳນົດສິ່ງຕໍ່ໄປນີ້:

ການຈັດສັນຈຳນວນເງິນຊ່ວຍເຫຼືອສູດສຸດຈາກ CalFresh: ນີ້ແມ່ນຈຳນວນເງິນຊ່ວຍເຫຼືອທີ່ຄົວເຮືອນຂອງທ່ານຈະໄດ້ຮັບ ຖ້າວ່າ ຄົວເຮືອນ ຂອງທ່ານບໍ່ມີລາຍໄດ້.

ຂະໜາດຄົວເຮືອນ:	1	2	3	4	5	6	7	8	ແຕ່ລະຄົນທີ່ເພີ່ມເຂົ້າມາ
	$194	$357	$511	$649	$771	$925	$1022	$1169	+146

- ໂດຍເພີ່ມຕື່ມ, ຄ່າທີ່ພັກສ່ວນເກີນປະຈຳເດືອນ (excess shelter deduction) ສູງສຸດໄດ້ເພີ່ມ ຈາກ $504.00 ເປັນ $517.00.
- ເງິນຊ່ວຍເຫຼືອຄ່າທີ່ພັກສຳລັບຜູ້ບໍ່ມີເຮືອນຢູ່ ຈຳນວນ $143.00 ນັ້ນຍັງຄົງຄືເກົ່າ.
- ການຫັກເງິນຕາມມາດຕະຖານໄດ້ປ່ຽນແປງ ດັ່ງຕໍ່ໄປນີ້:

ການຫັກເງິນຕາມມາດຕະຖານສຳລັບປີງົບປະມານ 2017:

ຂະໜາດຄົວເຮືອນ	ການຫັກເງິນມາດຕະຖານ
1 ຫາ 3 ຄົນ	$157.00
4 ຄົນ	$168.00
5 ຄົນ	$197.00
6 ຄົນຂຶ້ນໄປ	$226.00

ເງິນຊ່ວຍເຫຼືອຄ່າສາທາລະນູປະໂພກມາດຕະຖານ (Standard Utility Allowance: SUA) ຈຳນວນ $385.00 ໄດ້ເພີ່ມຂຶ້ນເປັນ $389.00.

ເງິນຊ່ວຍເຫຼືອຄ່າສາທາລະນູປະໂພກທີ່ຈຳກັດໄວ້ (Limited Utility Allowance: LUA) ຈຳນວນ $118.00 ໄດ້ເພີ່ມຂຶ້ນເລັກນ້ອຍເປັນ $122.00.

ຖ້າຫາກ ເງິນຊ່ວຍເຫຼືອ SUA/LUA ຖືກນຳໃຊ້ເປັນ ສ່ວນໜຶ່ງຂອງການຫັກຄ່າທີ່ພັກ ແລະຖ້າຫາກ ທ່ານ ບໍ່ມີການປ່ຽນແປງຫຍັງໃນກໍລະນີ CalFresh ຂອງທ່ານ, ເງິນຊ່ວຍເຫຼືອ CalFresh ຂອງທ່ານ ອາດມີການປ່ຽນແປງ. ດ້ວຍການປ່ຽນແປງໃນຈຳນວນ ເງິນຊ່ວຍເຫຼືອ CalFresh ຂອງທ່ານ, ຈຳນວນເງິນ ທີ່ທ່ານຈະໄດ້ຮັບນັ້ນແມ່ນຂຶ້ນກັບການປ່ຽນແປງອື່ນໆ ໃນຄົວເຮືອນ. ການປ່ຽນແປງເຫຼົ່ານີ້ຈະບອກໄວ້ໃນ ແຈ້ງການທີ່ທ່ານໄດ້ຮັບຊຶ່ງຈະບອກທ່ານກ່ຽວກັບ ການປ່ຽນແປງອື່ນໆ ໃນເງິນຊ່ວຍເຫຼືອ CalFresh ຂອງທ່ານ.

ຖ້າວ່າ ທ່ານຄິດວ່າພວກເຮົາເຮັດຜິດພາດໃນການຄິດໄລ່ ເງິນຊ່ວຍເຫຼືອ CalFresh ປະຈຳເດືອນຕຸລາຂອງທ່ານ ຍ້ອນການຈັດສັນຈຳນວນເງິນໃໝ່ ແລະ ເງິນຊ່ວຍເຫຼືອ SUA/LUA ທ່ານສາມາດຂໍໃຫ້ມີການພິຈາລະນາຄະດີ ໄດ້, ພາຍໃນ ***90 ວັນນັບແຕ່ວັນທີ່ທ່ານໄດ້ຮັບຈົດໝາຍ ສະບັບນີ້*** ໂດຍຂຽນເຖິງ:

ຫຼື ທ່ານສາມາດໂທຣຟຣີທີ່ເບີໂທຣ: 1-800-952-5253. ຖ້າວ່າ ທ່ານຫູໜວກ ແລະໃຊ້ສາຍໂທຣ TDD, ຂໍໃຫ້ໂທຣເບີ 1-800-952-8349. ເມື່ອທ່ານຂໍໃຫ້ມີການພິຈາລະນາຄະດີຂອງຣັຖ, ທ່ານຕ້ອງບອກພວກເຮົາ ວ່າເປັນຫຍັງທ່ານຈຶ່ງຄິດວ່າພວກເຮົາເຮັດຜິດພາດ. ທ່ານສາມາດເວົ້າດ້ວຍຕົນເອງຢູ່ທີ່ບ່ອນພິຈາລະນາຄະດີ ຫຼື ທ່ານສາມາດເອົາໝູ່ເພື່ອນ, ທະນາຍຄວາມ, ຫຼື ບຸກຄົນອື່ນເວົ້າແທນທ່ານໄດ້, ແຕ່ທ່ານຕ້ອງຂໍໃຫ້ຄົນ ເຫຼົ່ານີ້ມາຊ່ວຍທ່ານ. ທ່ານສາມາດຂໍການຊ່ວຍເຫຼືອທາງກົດໝາຍໄດ້ໂດຍບໍ່ເສັຽຄ່າທີ່ຫ້ອງການຊ່ວຍເຫຼືອທາງກົດໝາຍໃນເຂດຂອງທ່ານ.